ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ**

ເລກທີ 08 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 24.01.2017

# ຂໍ້ຕົກລົງ
# ວ່າດ້ວຍ ການປະຕິບັດພັນທະ ແລະ ການປະກອບສ່ວນ ຂອງປະຊາຊົນ ໃນການພັດທະນາບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບປັບປຸງ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງ ພາຍໃນ ສະບັບເລກທີ 344 /ພນ, ລົງວັນທີ 23 ສິງຫາ 2016.

**ນາຍົກລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ກ່ຽວກັບ ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນ ໃນການພັດທະນາບ້ານ ເພື່ອເປັນບ່ອນອີງ ໃຫ້ແກ່ການປະຕິບັດໜ້າທີ່ການເມືອງ ຂອງອົງການປົກຄອງບ້ານ ແນໃສ່ເຮັດໃຫ້ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນ ໃນການພັດທະນາບ້ານ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການ ໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ຄວາມໝາຍຂອງຄຳສັບ**

1. ການປະຕິບັດພັນທະຂອງປະຊາຊົນ

ການປະຕິບັດພັນທະຂອງປະຊາຊົນ ແມ່ນ ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງປະຊາຊົນທຸກຄົນ ຜູ້ເຖິງອາຍຸກະສຽນ 18 ປີ ຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ ຊຶ່ງຕ້ອງໄດ້ເຮັດ ເຊັ່ນ: ເຂົ້າຮ່ວມຂະ

ບວນປະຕິບັດວຽກງານລວມຂອງບ້ານ, ເສຍພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

2. ການປະກອບສ່ວນຂອງປະຊາຊົນ

ການປະຕິບັດການປະກອບສ່ວນຂອງປະຊາຊົນ ແມ່ນ ຄວາມຕື່ນຕົວສະໝັກໃຈຂອງປະຊາຊົນແຕ່ລະຄົນ, ແຕ່ລະຄອບຄົວ ໃນການປະກອບເງິນ, ວັດຖຸມີຄ່າ, ວັດຖຸສິ່ງຂອງ, ເຂົ້າ, ອາຫານ ແລະ ອື່ນໆ ຊ່ວຍເຫຼືອວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຜູ້ປະສົບເຄາະຮ້າຍ ຫຼື ໄພພິບັດຕ່າງໆ.

## ມາດຕາ 3 ຫຼັກການ

- ຮັບປະກັນ ຄວາມສະເໝີພາບ, ຍຸຕິທຳ ແລະ ລວມສູນປະຊາທິປະໄຕ:
  + ສະເໝີພາບ: ປະຊາຊົນທຸກຄົນ ມີສິດ ແລະ ພັນທະ ເທົ່າທຽມກັນ ຕາມກົດໝາຍ;
  + ຍຸຕິທຳ: ປະຊາຊົນຜູ້ໃດປະຕິບັດ ສິດ ແລະ ພັນທະ ຄົບຖ້ວນ ຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມນະໂຍບາຍຂອງລັດ, ຜູ້ໃດລະເມີດບໍ່ປະຕິບັດຈະຖືກສຶກສາອົບຮົມ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ;
  + ລວມສູນປະຊາທິປະໄຕ: ປະຕິບັດຕາມສຽງສ່ວນຫຼາຍ, ຕົກລົງບັນຫາສຳຄັນຕ່າງໆ ເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ;
- ປະຕິບັດ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
- ເປີດເຜີຍ, ໂປ່ງໃສ ແລະ ກວດສອບໄດ້.

## ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບ້ານ ໃນຂອບເຂດທົ່ວປະເທດ.

# ໝວດທີ 2
# ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນ

## ມາດຕາ 5 ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນ

ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນ ແມ່ນ ການເສີມຂະຫຍາຍ ແລະ ປະຕິບັດສິດເປັນເຈົ້າໃນທຸກດ້ານຂອງປະຊາຊົນໃນການປົກປັກຮັກສາ ແລະ ພັດທະນາບ້ານຂອງຕົນ ໃຫ້ເປັນບ້ານພັດທະນາຮອບດ້ານຕາມ 4 ເນື້ອໃນ 4 ຄາດໝາຍ, ລັດຖະບານ ແຫ່ງ ສປປ ລາວ ຈຶ່ງອອກຂໍ້ຕົກລົງສະບັບນີ້ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນທຸກໆບ້ານ ທົ່ວປະເທດ.

**ມາດຕາ 6 ພັນທະທີ່ປະຊາຊົນ ພາຍໃນບ້ານຕ້ອງປະຕິບັດຕໍ່ບ້ານ**

ປະຊາຊົນພາຍໃນບ້ານມີພັນທະຕ້ອງປະຕິບັດຕໍ່ບ້ານ ດັ່ງນີ້:

1. ດ້ານການເມືອງ-ການປົກຄອງ

ປະຊາຊົນພາຍໃນບ້ານ ທຸກຄົນ ທີ່ມີເງື່ອນໄຂ ແລະ ມາດຕະຖານ ຄົບຖ້ວນ ມີໜ້າທີ່ ແລະ ຄວາມຮັບຜິດຊອບເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດວຽກງານການເມືອງ, ການປົກຄອງຂອງບ້ານຕາມເງື່ອນໄຂຕົວຈິງ ເປັນຕົ້ນ: ສະໝັກຮັບເລືອກຕັ້ງເປັນນາຍບ້ານ, ໄປປ່ອນບັດເລືອກຕັ້ງເອົານາຍບ້ານ, ເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ, ເຂົ້າຮ່ວມຮັບຟັງການເຜີຍແຜ່ເຊື່ອມຊຶມບັນດາເອກະສານຂອງຂັ້ນເທິງ, ເຂົ້າຮ່ວມການບໍລິຫານບ້ານ, ເຂົ້າຮ່ວມການປັບປຸງ ກໍ່ສ້າງອົງການປົກຄອງບ້ານ ແລະ ອື່ນໆ ຕາມຄວາມສາມາດ.

2. ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

ປະຊາຊົນພາຍໃນບ້ານ ທຸກຄົນ ທີ່ມີເງື່ອນໄຂ ແລະ ມາດຕະຖານ ຄົບຖ້ວນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕາມເງື່ອນໄຂຕົວຈິງ ໃນເວລາບ້ານມີຄວາມຕ້ອງການ ເປັນຕົ້ນ: ສະໝັກເປັນກອງຫຼອນ, ເປັນກຳລັງປ້ອງກັນຄວາມສະຫງົບ, ເສຍສ່ວຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເປັນຫູເປັນຕາ ແລະ ລາຍງານ ປາກົດການຫຍໍ້ທໍ້ ໃຫ້ເຈົ້າໜ້າທີ່ຊາບ ຢ່າງທັນການພ້ອມທັງຊ່ວຍເຫຼືອກໍ່ສ້າງໃຫ້ຜູ້ອອກຈາກການຄຸມຂັງ ກັບເຂົ້າສັງຄົມໄດ້.

3. ດ້ານວັດທະນະທຳ-ສັງຄົມ

ປະຊາຊົນພາຍໃນບ້ານ ທຸກຄົນ ທີ່ມີເງື່ອນໄຂ ແລະ ມາດຕະຖານ ຄົບຖ້ວນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດວຽກງານ ວັດທະນະທຳ-ສັງຄົມ ຂອງບ້ານ ຕາມເງື່ອນໄຂຕົວຈິງ ໃນເວລາບ້ານມີຄວາມຕ້ອງການ ເປັນຕົ້ນ: ສົ່ງລູກຫຼານເຂົ້າ ຮຽນໜັງສື, ປະກອບສ່ວນທຶນຮອນ ແລະ ແຮງງານປຸກສ້າງໂຮງຮຽນ ແລະ ສຸກສາລາ, ເຂົ້າຮ່ວມຂະບວນອານາໄມສາມສະອາດ, ປະກອບສ່ວນເບິ່ງແຍງ ຄູ ແລະ ແພດໝໍ ທີ່ລົງເຮັດວຽກປະຈຳຢູ່ບ້ານ, ປົກປັກຮັກສາ ແລະ ເສີມຂະຫຍາຍ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ບ້ານ, ສຶກສາອົບຮົມລູກຫຼານໃຫ້ເປັນຄົນດີ, ມີຄວາມຮັກຊາດ, ດຸໝັ່ນອອກແຮງງານທຳການຜະລິດ ຊ່ວຍເຫຼືອເກື້ອກູນຜູ້ດ້ອຍໂອກາດ ແລະ ຜູ້ຖືກປະສົບຄວາມລຳບາກຍາກເຂັນ.

4. ດ້ານເສດຖະກິດ

ປະຊາຊົນພາຍໃນບ້ານ ທຸກຄົນ ທີ່ມີເງື່ອນໄຂ ແລະ ມາດຕະຖານ ຄົບຖ້ວນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດວຽກງານຜະລິດທຸລະກິດ ຂອງບ້ານຕາມເງື່ອນໄຂຕົວຈິງ ໃນເວລາບ້ານມີຄວາມຕ້ອງການ ເປັນຕົ້ນ: ສ້າງເສດຖະກິດຄອບຄົວຂອງຕົນໃຫ້ມີຢູ່ມີກິນ ແລະ ຮັ່ງມີຂຶ້ນເລື້ອຍໆ, ເຂົ້າຮ່ວມຂະບວນການພັດທະນາເສດຖະກິດ ຂອງບ້ານຢ່າງເປັນເຈົ້າການ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງບ້ານໃຫ້ມີຄວາມຍືນຍົງ, ເສຍພາສີ, ອາກອນ ໃນກິດຈະກຳທຳມາຫາກິນຂອງຕົນ ຕາມກົດໝາຍ, ລະບຽບການຂອງລັດ, ເສຍເງິນອຸດໜູນບ້ານ ຕາມມະຕິກອງປະຊຸມບ້ານ, ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ, ປະກອບສ່ວນເຮັດວຽກບ້ານ ຕາມການມອບໝາຍ

ຂອງອົງການປົກຄອງບ້ານ, ປະຕິບັດກົດລະບຽບບ້ານ, ເຂົ້າຮ່ວມກອງປະຊຸມບ້ານ ແລະ ປະກອບຄຳຄິດ-ຄຳເຫັນ ໃຫ້ແກ່ອົງການປົກຄອງບ້ານ ໃນການສ້າງສາພັດທະ ນາດ້ານເສດຖະກິດ.

**ມາດຕາ 7 ການປະກອບສ່ວນຂອງປະຊາຊົນພາຍໃນບ້ານ ໃນການພັດທະນາບ້ານຂອງຕົນ**

ປະຊາຊົນພາຍໃນບ້ານ ທຸກຄົນ ຫຼື ທຸກຄອບຄົວ ທີ່ມີເງື່ອນໄຂ ແລະ ມາດຕະຖານ ຄົບຖ້ວນ ມີໜ້າທີ່ ແລະ ຄວາມຮັບຜິດຊອບປະກອບສ່ວນທຶນຮອນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງບ້ານ ເມື່ອບ້ານມີຄວາມຕ້ອງການ ເປັນຕົ້ນ: ປະກອບສ່ວນທຶນຮອນ ເຂົ້າໃນການສ້າງທາງເຂົ້າບ້ານ, ສ້າງ ແລະ ສ້ອມແປງຝາຍກັ້ນນ້ຳ, ຊົນລະປະທານຂະໜາດນ້ອຍ, ນ້ຳບາດານ, ນ້ຳລິນ, ຊຸດສະ, ສະໂມສອນປະຈຳບ້ານ, ຫໍສະໝຸດປະຈຳບ້ານ, ອຸດໜູນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອຸດໜູນຄອບຄົວຜູ້ທີ່ມີການເສຍຊີວິດ, ຜູ້ປະສົບໄພພິບັດຕ່າງໆ, ຄອບຄົວທຸກຍາກ, ຄູ ແລະ ແພດ ທີ່ເຮັດວຽກປະຈຳຢູ່ບ້ານ, ກອງປະຊຸມຕ່າງໆຂອງບ້ານ, ການປຸກສ້າງ ແລະ ສ້ອມແປງໂຮງຮຽນ, ສຸກສາລາ, ສິ່ງປຸກສ້າງວັດວາອາຣາມ ທີ່ເປັນວຽກ ແລະ ຜົນປະໂຫຍດລວມຂອງບ້ານ.

## ໝວດທີ 3
## ການຍ້ອງຍໍ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດ

**ມາດຕາ 8 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ປະຕິບັດດີ, ມີຜົນງານເດັ່ນ ຕ້ອງໄດ້ຮັບການຍ້ອງຍໍຊົມເຊີຍ ຈາກລັດ ຢ່າງສົມກຽດ.

**ມາດຕາ 9 ມາດຕະການຕໍ່ຜູ້ລະເມີດ**

ຜູ້ຫຼີກລ້ຽງການປະຕິບັດພັນທະ ແລະ ການປະກອບສ່ວນເຂົ້າໃນການພັດທະນາບ້ານ ຕ້ອງຖືກຕຳນິຕິຊົມ ຈາກຄະນະພັກ ແລະ ອົງການປົກຄອງບ້ານ ຢ່າງເໝາະສົມ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

- ອົງການປົກຄອງ ຂັ້ນແຂວງ, ຂັ້ນເມືອງ ຈົ່ງຈັດຕັ້ງເຜີຍແຜ່ແນະນຳ ໃຫ້ອົງການປົກຄອງບ້ານ, ປະຊາຊົນ ແລະ ເປົ້າໝາຍ ທີ່ກ່ຽວຂ້ອງເຂົ້າໃຈ, ເຊື່ອມຊຶມ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ຖືກຕ້ອງ;
- ກະຊວງ, ອົງການຂັ້ນສູນກາງ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ;

- ກະຊວງ ພາຍໃນ  ເປັນໃຈກາງຊຸກຍູ້ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ພ້ອມທັງຕິດຕາມ ແລະ  ສະຫຼຸບ-ລາຍງານ ລັດຖະບານຊາບ ຢ່າງເປັນປົກກະຕິ.

**ມາດຕາ 11  ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນ ໃນການພັດທະນາບ້ານ ສະບັບເລກ ທີ 120/ນຍ, ລົງວັນທີ 24 ກັນຍາ 2012.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ